**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

**=====000=====**

ນະຄອນຫຼວງວຽງຈັນ

ພະແນກສຶກສາທິການ ແລະ ກິລາ

ເລກທີ...4321....../ສກນວ

ວັນທີ...8/10/24...

# ແຈ້ງການ

## ກະກຽມຂຽນຜົນງານການປະຕິບັດໜ້າທີ່ວຽກງານ ຂອງພະນັກງານລັດຖະກອນ-ບໍລິຫານ ປະຈໍາປີ 2024

- **ອີງຕາມ** ກົດໝາຍວ່າດ້ວຍພະນັກງານລັດຖະກອນ ສະບັບເລກທີ 74/ສພຊ, ລົງວັນທີ 18 ທັນວາ 2015;
- **ອີງຕາມ** ດໍາລັດນາຍົກລັດຖະມົນຕີ ວ່າດ້ວຍການປະເມີນຜົນການປະຕິບັດວຽກງານ ຂອງພະນັກງານ-ລັດຖະກອນ, ເລກທີ 300/ລບ, ລົງວັນທີ 13 ກັນຍາ 2017;
- **ອີງຕາມ** ຄໍາແນະນໍາການຈັດຕັ້ງປະຕິບັດດໍາລັດວ່າດ້ວຍການປະເມີນຜົນການປະຕິບັດວຽກງານຂອງພະນັກງານ-ລັດຖະກອນ, ເລກທີ **06**/ພນ, ລົງວັນທີ **02** ພຶດສະພາ **2018;**
- **ອີງຕາມ** ຂໍ້ຕົກລົງ ຂອງເຈົ້າຄອງນະຄອນຫຼວງວຽງຈັນ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງພະແນກສຶກສາທິການ ແລະ ກິລາ ນະຄອນຫຼວງວຽງຈັນ ສະບັບເລກທີ 145/ຈນວ, ລົງວັນທີ 03/02/2023;
- **ອີງຕາມ** ແຈ້ງການ ຂອງເຈົ້າຄອງນະຄອນຫຼວງວຽງຈັນ ວ່າດ້ວຍການປະເມີນຜົນງານຂອງພະນັກງານ-ລັດຖະກອນ ປະຈໍາປີ2024 ສະບັບເລກທີ 07/ພນ.ນວ, ລົງວັນທີ 23/09/2024;
- **ອີງຕາມ** ແຜນວຽກປະຈໍາປີຂອງຂະແໜງຈັດຕັ້ງ ແລະ ພະນັກງານ.

### ຫົວໜ້າພະແນກສຶກສາທິການ ແລະ ກິລາ ຈຶ່ງ

ຂໍຖືເປັນກຽດແຈ້ງມາຍັງພະນັກງານລັດຖະກອນ-ບໍລິຫານທັງໝົດ ພາຍໃນພະແນກສຶກສາທິການ ແລະ ກິລາ ນະຄອນຫຼວງວຽງຈັນ ເພື່ອໃຫ້ຂຽນຜົນງານຂອງຕົນເອງໃສ່ຮ່າງແບບພິມໃບປະເມີນປະຈໍາປີ, ໃຫ້ພະນັກງານລັດຖະກອນ-ບໍລິຫານ ແຕ່ລະທ່ານໄດ້ສັງລວມໜ້າວຽກຂອງຕົນເອງທີ່ໄດ້ເຮັດຕົວຈິງໃຫ້ລະອຽດທີ່ໄດ້ປະຕິບັດມາຕັ້ງແຕ່ ເດືອນ10 ປີ 2023 ຫາ ເດືອນ 9 ປີ2024 ໃຫ້ສໍາເລັດກ່ອນວັນທີ 15 ຕຸລາ 2024 ນີ້ ແລ້ວສົ່ງໃຫ້ຂະແໜງຈັດຕັ້ງ ແລະ ພະນັກງານ ໃຫ້ທັນຕາມເວລາທີ່ໄດ້ກໍານົດໄວ້.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງພະນັກງານລັດຖະກອນ-ບໍລິຫານທັງໝົດຮັບຊາບ ແລະ ພ້ອມກັນຈັດຕັ້ງປະຕິບັດຕາມແຈ້ງການສະບັບນີ້ຢ່າງເຂັ້ມງວດ.

**ຫົວໜ້າພະແນກ**

ພະແນກສຶກສາທິການ ແລະ ກິລາ ນະຄອນຫຼວງວຽງຈັນ

ສົມພອນ ສອນດາລາ